**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ກົມຊົນລະປະທານ

ເລກທີ 1674 /ຊປທ

ນະຄອນຫຼວງວຽງຈັນ, ວັນທີ 13 MAY 2026

# ໜັງສືແຈ້ງເຊີນປະມູນ

1. ກົມຊົນລະປະທານ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະ ທີ່ດຳເນີນກິດຈະການ ເກັບກູ້ລະເບີດບໍ່ທັນແຕກ ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງ ການສຳຫຼວດ ແລະ ເກັບກູ້ລະເບີດບໍ່ທັນແຕກ ທີ່ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ ປະຈຳປີ 2026 ບ້ວງທຶນສົມທົບ ໂຄງການສົ່ງເສີມການພັດທະນາຊົນລະປະທານ ທີ່ທົນທານຕໍ່ການປ່ຽນແປງດິນຟ້າອາກາດ ຢູ່ເມືອງບົວລະພາ ແຂວງຄຳມ່ວນ (PPRI) ເພື່ອສຳຫຼວດ ແລະ ເກັບກູ້ລະເບີດໃນຂອບເຂດໂຄງການ.
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການຄຸ້ມງານການກໍ່ສ້າງໂຄງການຊົນລະປະທານ;
4. ບໍລິສັດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ກົມຊົນລະປະທານ (ພະແນກແຜນການ ແລະ ການຮ່ວມມື) ຊັ້ນ 2, ບ້ານອານຸ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທຕິດຕໍ່ 020 5544 6691; 021 457 333, ຊຶ່ງຈະໄດ້ຂະຫຍາຍເວລາໃນການຂາຍຊອງປະມູນເລີ່ມແຕ່ວັນທີ 12 ພຶດສະພາ 2026 ເຖິງ ວັນທີ 28 ພຶດສະພາ 2026 (ໃນໂມງລັດຖະການ);
5. ຊອງປະມູນ ຕ້ອງສົ່ງກ່ອນ ເວລາ 13:00 ໂມງ ຂອງວັນທີ 28/5/2026. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກົມຊົນລະປະທານ

K. [signature]

ປອ ຄຳພະຈັນ ວົງຊະນະ